ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**
*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**
**ເລກທີ ໔໕໔/ປພຖຊ/໐໔໔໙໐໙**

# ບົດຄວາມ

## ຕອບໂຕ້ພອນປີໃໝ່ ພສ. 2552

### ຂອງ ປະທານປະເທດ (ຕອນ 2.)

ການຕໍ່ສູ້ ຂອງປະຊາຊົນ ກ້າວເຂົ້າສູ່ຫລັກໄຊ

ການຕໍ່ສູ້ ຂອງພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ໄດ້ກ້າວເຂົ້າສູ່ຫລັກໄຊ ຢ່າງສ່ວາງອາດຕີແນວນີ້, ກໍຍ້ອນວ່າ ການຕໍ່ສູ້ຂອງພວກເຮົາ ໄດ້ທັບມ້າງທຸກແຜນຍຸທສາດ ຍຸທທະວິທີ ໃນການຮັກສາອຳນາດຜເດັດການ ດ້ວຍການຂາຍປະເທດຊາດ ໃຫ້ ວຽດນາມ ແລະ ໃຫ້ນັກລົງທືນຕ່າງຊາດ ເຂົ້າມາປົກປ້ອງອຳນາດຜເດັດການໄວ້ ກໍຄື: ເຂົ້າມາປົກປັກຮັກສາ ຜົນປໂຍດ ຂອງພວກເຂົາ ທີ່ມີຢູ່ໃນລາວ ຖືກຫລົ້ມເຫລວແລະປຣາໄຊລົງ ຢ່າງຢັບເຍີນ. ປະຊາຊົນລາວ ທັງໃນແລະນອກປະເທດ ບໍ່ເຫັນດີເຫັນນຳ ພ້ອມທັງລຸກຂຶ້ນມາຕໍ່ສູ້ ຢ່າງເຂງເຮງ ຕາມແນວທາງສັນຕິວິທີ.

ອົງການຈັດຕັ້ງສາກົນຕ່າງໆ ເປັນຕົ້ນ: ອົງການແມ່ນ້ຳຂອງສາກົນ (International Rivers), ອົງການສືບສວນສິ່ງແວດລ້ອມສາກົນ (EIA/Telapak), ອົງການຮັກສາສະພາບ ແວດລ້ອມ ທີ່ບໍ່ຂຶ້ນກັບຣັຖບານ(NGO), ທະນາຄານໂລກ(WB), ທະນາຄານພັທນາອາຊຽນ (ADB). ກໍອອກມາກ່າວປະນາມ ກ່ຽວກັບການສ້າງເຂື່ອນ, ການຂຸດຄົ້ນບໍ່ແຮ່ໂລຫະ, ການໃຫ້ ສຳປະທານ ທີ່ດິນປູກຕົ້ນໄມ້ອຸດສາຫະກຳ ຢ່າງຫລວງຫລາຍ ແບບບໍ່ຍຸຕິທັມ.

ການບຸກຣະດົມປະຊາຊົນທົ່ວປະເທດ ໃຫ້ຮ່ຳຮຽນເອກສານ ທີ່ມີຊື່ວ່າ **"ຕອບຕ້ານຍຸທສາດ ທັນປ່ຽນໂດຍສັນຕິ ຂອງອິດທິກຳລັງຈັກກະພັດແລະປະຕິການລະຍະໃໝ່"** ກໍຫລົ້ມເຫລວຢ່າງສິ້ນເຊີງ ເມື່ອປະຊາຊົນຮູ້ແລະເຂົ້າໃຈວ່າ ພວກເຮົາ ບໍ່ແມ່ນອິດທິກຳລັງຈັກກະພັດ ແລະບໍ່ແມ່ນ ປະຕິການລະຍະໃໝ່ຢ່າງເດັດຂາດ. **ພວກເຮົາ ແມ່ນ ປະຊາຊົນທີ່ ຖືກພັກຣັດຕັດສິດທິເສຣີພາບນັ້ນເອງ!. ພວກເຮົາປະຊາຊົນພັກແລະກຳລັງທັບ ເສຣີປະຊາທິປະໄຕລາວ, ເປັນກຳລັງທີ່ມາຈາກປະຊາຊົນ ຈັດຕັ້ງຂຶ້ນ ໂດຍປະຊາຊົນແລະເພື່ອຜົນປໂຍດ ຂອງປະຊາຊົນຢ່າງແທ້ຈິງ!** ເປັນກຳລັງທາງການເມືອງ ໂດຍຍຶດຖືເອົາຫລັກ ສິດທິມະນຸດຊາດ ເປັນພື້ນຖານຂອງກຳລັງການຕໍ່ສູ້, ປະຕິບັດພາຣະກິດຊາດ ຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ ພາຍໃຕ້ນະໂຍບາຍການຕໍ່ສູ້ແບບສັນຕິວິທີ ຫລື ສຽງປືນບໍ່ແຕກນັ້ນເອງ!.

ແຜນສກັດກັ້ນ, ປາບປາມນັກຕໍ່ສູ້ ຕາມຊາຍແດນ ໄທລາວ-ລາວໄທຍ ຂອງພັກຣັດ ກໍຫລົ້ມເຫລວ, ເພາະພວກເຮົາ ບໍ່ໄດ້ໃຊ້ແຜ່ນດິນໄທຍ ເປັນບ່ອນເຄື່ອນໄຫວຕໍ່ສູ້. ຍິ່ງໄປກວ່ານັ້ນ, ຣັຖບານໄທຍ ຈັບຜູ້ໃດ ທີ່ມີປະກົດການຕ້ານຣັຖບານລາວ ກໍສົ່ງຄືນໃຫ້ລາວ ຕາມສັນຍາ ຮັກສາຄວາມສງົບຊາຍແດນ ນັ້ນ, ກໍລ້ວນແລ້ວແຕ່ແມ່ນ ນັກສືບສອດແນມ ທີ່ພັກຣັດສົ່ງເຂົ້າໄປກໍ່ກວນ ໃຫ້ຫລິ້ນລະຄອນ ສາກ ຕ້ານຣັຖບານລາວ. ອີກປະການນຶ່ງ, ການຈ່າຍເງິນຢ່າງຫລວງຫລາຍ ຈ້າງຕຳຣວດໄທຍອູ້ມຊ້າ ແລະ ລອບສັງຫານ ຄົນລາວຕາມຊາຍແດນ ລວມທັງຜູ້ຖືສັນຊາດ ອະເມຣິກັນອີກຫລາຍຄົນ; ການສືບສວນ ໄດ້ບົ່ງບອກວ່າ **"ມາຈາກມືເປື້ອນເລືອດ ຂອງພັກຣັດ ວຽງຈັນທັງນັ້ນ!.**

ພັກຣັດ ປຣາໄຊ ໃນ **ໂຄງການ ຮັບເອົາອົພຍົບກັບຄືນປະເທດ** ດ້ວຍຄວາມສມັກໃຈ, ໂດຍມີເປົ້າໝາຍ: ດ້ານນຶ່ງ, ຫວັງຈະໄດ້ການຊ່ວຍເຫລືອລ້າ ເຂົ້າມາຍາດແຍ່ງແບ່ງກັນກິນ ແລະ ອີກດ້ານນຶ່ງ ກໍເພື່ອດັບສູນການຕໍ່ສູ້ຂອງປະຊາຊົນລາວ ແບບຖືກຕ້ອງຕາມກົດໝາຍ; ແຕ່ແລ້ວ, ກໍປຣາໄຊອີກ! ເພາະບຸກຄົນ ທີ່ສມັກກັບຄືນປະເທດນັ້ນ, ກໍລ້ວນແລ້ວແຕ່ແມ່ນນັກສືບສອດແນມ ທີ່ພັກຣັດໃຫ້ປອມຕົວເປັນອົພຍົບ ເຂົ້າໄປຢູ່ໃນສູນທັງນັ້ນ!. ຊ້ຳບໍ່ໜຳ, ພາຍຫລັງທີ່ກັບຄືນ ປະເທດແລ້ວ, ພັກຣັດເອົາໄປໄວ້ບ່ອນໃດ...ໆປະຊາຊົນບ່ອນນັ້ນ...ກໍຮຽນເອົາແບບແຜນການດຳຣົງຊີວິດ ທີ່ມີອິສຣະເສຣີ, ແລະມີການເປັນຢູ່ ດີຂຶ້ນກວ່າເກົ່າ ນຳພວກເຂົາ.

ການຮັບອົພຍົບກັບຄືນປະເທດ ກໍເທົ່າກັບວ່າ "ພັກຣັດ ໄດ້ນຳເອົາແນວເຂົ້າປູກພັນເສຣີມາຫວ່ານ" ປະຊາຊົນ ກ້າປາກກ້າເວົ້າ, ການຕຳນິຕິຕຽນການກະທຳຂອງພັກຣັດ ທີ່ມີລັກສນະ ທຳລາຍຊາດ, ທຳລາຍປະຊາຊົນ ນັບວັນນັບຫລາຍຂຶ້ນຢ່າງເປັນຂບວນອີກດ້ວຍ.

ແຜນການ ຕົວະຍົວະຫລອກລວງ ກຸ່ມປະເທດເສຣີ ໃຫ້ເຂົ້າມາສນັບສນູນ ການບໍຣິຫານປະເທດຊາດ ແບບຜເດັດການພັກດຽວ ດ້ວຍການເຂົ້າໄປເປັນສາມະຊິກສະມາຄົມອາຊຽນ ກໍຍິ່ງເຮັດໃຫ້ພັກຣັດ ປຣາໄຊຢ່າງເຈັບແສບ, ແທນທີ່ຈະໄດ້ເຂົ້າໄປໂຄສນາຊວນເຊື່ອ ອວດອ້າງຄວາມດີຄວາມເກັ່ງ, ກໍກາຍເປັນການ ໄປຕົກເຂົ້າບ້ວງເຮ້ວສາກົນ; ໄດ້ຍອມຮັບເອົາຫລັກການຕ່າງໆ ທີ່ຕຣົງກັນຂ້າມກັບອຳນາດຜເດັດການມາປະຕິບັດ ເຊັ່ນ: ຕ້ອງເຄົາຣົບຕໍ່ສິດທິມະນຸດ, ຕ້ອງຢຸດຕິການປູກຝິ່ນ,.

ຕ້ອງປາບປາມການສໍ້ຣາດບັງຫລວງ, ຕ້ອງເອົາໃຈໃສ່ແກ້ໄຂເດັກທີ່ມີບັນຫາ, ຕ້ານການຄ້າຢາເສບຕິດ, ຕ້ານການຄ້າມະນຸດຕ່າງໆເຫລົ່ານີ້ເປັນຕົ້ນ.

ແຜນຍິ່ມມີຄົນລາວຕ່າງປະເທດ ທັບມ້າງກັນເອງ, ໂດຍສວຍໃຊ້ກຸ່ມ ຢັງ ດາວ/ສຸຣິວັນຄໍາວົງໄຊ ແລະພນັກງານສິ່ງນອກ ຂອງພັກຣັດ ໃນຄາບນັກບວດ, ນັກທ່ອງທ່ຽວ/ຢ້ຽມຍາດພີ່ນ້ອງ, ນັກສິລປະ ວັນະຄະດີ, ແລະນັກທຸຣະກິດເອກເທດ ໃຫ້ຊ່ວຍກັນ ທັບມ້າງການຕໍ່ສູ້ ຂອງຄົນລາວນອກປະເທດ ແລະໃຫ້ລາຍງານການເຄື່ອນໄຫວຕ່າງໆ ຕໍ່ສະຖານທູດລາວ. ພ້ອມດຽວກັນນັ້ນ, ກໍໃຫ້ແລ່ນຫາສຽງ ສນັບສນູນ ຈາກອົງການຈັດຕັ້ງສາກົນ ຫລືບຸກຄົນສໍາຄັນໃນສະຫະຣັດ **ໂດຍປ້ອນຄວາມຫວັງ ຈະໃຫ້ເປັນຄູ່ຕໍ່ລອງ ແກ້ໄຂບັນຫາລາວທາງການເມືອງ ຕາງໜ້າໃຫ້ລາວນອກ,** ອັນນີ້ກໍປຣາໄຊອີກ!. ເຖິງແມ່ນທ່ານ ຢັງດາວ ມີຜົນງານຫລາຍຢ່າງ ທີ່ໄດ້ລາຍງານ ຕໍ່ທ່ານສົມສວາດ ເລັ່ງສວັດ ໄປແລ້ວວ່າ "ມີພີ່ນ້ອງມົ້ງ ຈົບປຣິນຍາເອກໄປແລ້ວ 200 ຄົນກໍຕາມ, ແຕ່ **ສາກົນ ກໍບໍ່ເຫັນດີເຫັນພ້ອມ** ໃນການຮັບເອົາ ກຸ່ມ ຢັງດາວ ອອກມາຫລິ້ນລະຄອນ ຫລອກລວງຕາໂລກ!... ເພາະບໍ່ສາມາດ ຈະແກ້ໄຂບັນຫາລາວໄດ້, ຍ້ອນວ່າ, ກຸ່ມນີ້, ເກີດມາຈາກທ້ອງຄອມມິວນິສ. ສຸດທ້າຍ, ກໍຈະຖືກ ວຽດນາມຄວບຄຸມເໝືອນເດີມ ແລະການຕໍ່ສູ້ຂອງປະຊາຊົນລາວ ກໍຈະບໍ່ມີວັນສິ້ນສຸດລົງໄດ້.

ໄຊຊນະ ທີ່ກະໂດດຂັ້ນ ຂອງການຕໍ່ສູ້, ໄດ້ເຮັດໃຫ້ພັກຣັດ ຫົກເຫີມທະນົງຕົວ ອອກມາປະກາດ ທ່າທີ ທາງການເມືອງ ແລະທາງເສຖກິດ ໄດ້ສໍາເຣັດ ຄື: ທ່ານ ບຸນຍັງ ວໍຣະຈິດ ຮອງປະທານປະເທດ ອອກມາປະກາດ ວ່າ "**ຈະສ້າງ ພລັງງານໄຟຟ້າ ໃຫ້ເປັນໝໍ້ໄຟ ໃນພາກພື້ນ**" ແລະ ທ່ານ ບົວສອນ ບຸບຜາວັນ ນາຍົກຣັຖມົນຕຣີ ກໍໄປປະກາດ ຢູ່ປະເທດສິງກະໂປຕື່ມອີກວ່າ "**ລາວບໍ່ມີແຜນສ້າງ ປະຊາທິປະໄຕ, ມີແຕ່ສ້າງພລັງງານໄຟຟ້າ". ຢູ່ລາວ ບໍ່ມີປະຊາທິປະໄຕ, ມີແຕ່ສ້າງຄົມມິວນິສຍົມ ຄອມມິວນິສຢ່າງດຽວ**".

ພວກເຮົາ ປະຊາຊົນພັກແລະກໍາລັງທັບ ເສຣີປະຊາທິປະໄຕລາວ ກໍໄດ້ຂຽນບົດຄວາມ ລົງໃນ web-site: www.laofreedom.com ໃນວັນທີ 20/12/2007 ວ່າ"ສັນຕິວິທີ ໄດ້ເຂົ້າມາຢືນຢູ່ ປະຕູບ້ານສປປລາວ, ເພາະວ່າ ການອອກປະກາດທ່າທີທາງເສຖກິດ ແລະ ທາງການເມືອງຢ່າງຈະແຈ້ງດັ່ງນີ້, ມັນໄດ້ເຮັດໃຫ້ອົງການຈັດຕັ້ງສາກົນ ແລະປະເທດຕ່າງໆ ທີ່ເຄີຍໃຫ້ການຊ່ວຍເຫລືອ ໄດ້ທົບທວນຄືນ ເຖິງຜົນກະທົບ ທີ່ປະຊາຊົນໄດ້ຮັບ ຈາກການຊ່ວຍເຫລືອ ຢ່າງຜິດພາບຂອງຕົນ. ບາງປະເທດ ກໍໂຈະ ການຊ່ວຍເຫລືອໄວ້ກ່ອນ, ບາງປະເທດ ກໍລົດການຊ່ວຍເຫລືອລົງ, ບາງປະເທດ ກໍຢຸດຕິຢ່າງສິ້ນເຊີງ! ແລະອາດຈະອັດສະຖານທູດຂອງຕົນ ໜີໄປຊ່ວຍເຫລືອປະເທດອື່ນ ບ່ອນທີ່ປະຊາຊົນ ໄດ້ຮັບຜົນປໂຍດ ຫລາຍກວ່າ ດັ່ງທີ່ປະເທດ Sweden ໄດ້ເປັນຕົວຢ່າງມາແລ້ວກໍອາດຈະເປັນໄປໄດ້!.

ການຕໍ່ສູ້ຂອງພວກເຮົາປະຊາຊົນພັກແລະກໍາລັງທັບເສຣີປະຊາທິປະໄຕລາວ ໄດ້ຮັບໄຊຊນະ ເປັນຂັ້ນໆ ມາເຖິງຈຸດນີ້, ກໍເພາະ ບັນດາອົງການຈັດຕັ້ງສາກົນ ແລະບັນດາປະຊາຊົນ ຂອງປະເທດເພື່ອນມິຕ ໃນທົ່ວໂລກ ກໍໃຫ້ການອູ້ມຊູສນັບສນູນ ຢ່າງຈິງຈັງຈິງໃຈ ແລະພວກເຮົາປະຊາຊົນລາວທຸກທົ່ວໜ້າ ທັງໃນ ແລະນອກປະເທດ ກໍມີຄວາມກ້າຫານ, ບໍ່ຍອມຈໍານົນ, ຜ່ານຜ່າທຸກອຸປສັກນາໆປະການ, ມີນໍ້າໃຈເສັຽສລະ

ອັນສູງສົ່ງ, ສຸມທຸກສະຕິປັນຍາ, ສຸມທຸກກຳລັງພົນ, ກຳລັງຊັບເທົ່າທີ່ມີ ເຂົ້າໃສ່ການປະຕິວັດ ຕ້ານ ຄວາມເປັນຜເດັດການ ຂອງພັກຣັດວຽງຈັນ. ມີຄວາມອົດທົນເປັນຢ້ຽມ! ຜ່ານອຸປສັກນາໆປະການ

ມາໄດ້ 25 ປີແລ້ວ,(1/3/84-2009) ຈຶ່ງສາມາດເຂົ້າມາສູ່ຫລັກໄຊໄດ້.

*(ເຊີນຕິດຕາມ ຕອນຕໍ່ໄປ.)*

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໒໙ ເມສາ ໒໐໐໙**